**35. ການຈັບຄູ່ໝາຍຄວາມວ່າແນວໃດ? ແລະ ການຊື້-ຂາຍຮຸ້ນແມ່ນຊື້-ຂາຍໄດ້ຈັກຮຸ້ນຂຶ້ນໄປ?**

ການຈັບຄູ່ ແມ່ນການຄົ້ນຫາຄຳສັ່ງຊື້ ແລະ ຄຳສັ່ງຂາຍຮຸ້ນທີ່ມີລາຄາເທົ່າກັນ ທີ່ສັ່ງຊື້-ຂາຍໃນເວລາດຽວກັນ. ປະຈຸບັນ ຕະຫຼາດຫຼັກຊັບລາວ (ຕລຊລ) ແມ່ນນຳໃຊ້ຫຼັກການຈັບຄູ່ຊື້-ຂາຍຮຸ້ນແບບບວິນາທີຕໍ່ວິນາທີ ແລະ ການຊື້-ຂາຍຮຸ້ນໃນ ຕລຊລ ໃນແຕ່ລະຄັ້ງແມ່ນສາມາດສົ່ງຄຳສັ່ງຊື້ ຫຼື ຂາຍຮຸ້ນໄດ້ນັບແຕ່ 1 ລ໋ອດ (1 ລ໋ອດ = 100 ຮຸ້ນ) ຂຶ້ນໄປ.

ການຈັບຄູ່ ແມ່ນອີງຕາມຫຼັກການທີ່ກຳນົດໄວ້ຢູ່ໃນລະບຽບການຂອງ ຕລຊລ ຄື: "ລະບຽບວ່າດ້ວຍການເຄື່ອນໄຫວຊື້-ຂາຍຫຼັກຊັບ" (Market Operation Regulation) ມາດຕາ 13 ກຳນົດໄວ້ວ່າ: ຫຼັກການຈັບຄູ່ ແລະ ຈັດສັນຮຸ້ນຂອງ ຕລຊລ ແມ່ນອີງຕາມ 3 ບູລິມະສິດ ຄື:

1) ບູລິມະສິດດ້ານລາຄາ

- ດ້ານຜູ່ຂາຍ: ສົ່ງຄຳສັ່ງຂາຍທີ່ມີລາຄາຕ່ຳກວ່າຈະໄດ້ບູລິມະສິດກ່ອນ.
- ດ້ານຜູ່ຊື້: ສົ່ງຄຳສັ່ງຊື້ທີ່ມີລາຄາສູງກວ່າຈະໄດ້ບູລິມະສິດກ່ອນ.

<u>ຕົວຢ່າງ</u>:

| ຜູ່ລົງທຶນ | ເວລາ | ຈຳນວນຮຸ້ນສະເໜີຂາຍ (ຮຸ້ນ) | ລາຄາ (ກີບ) | ຈຳນວນຮຸ້ນສະເໜີຊື້ (ຮຸ້ນ) | ເວລາ | ຜູ່ລົງທຶນ |
|---|---|---|---|---|---|---|
| ກ | 9:05 | 1.000 | 7.500 | | | |
| | | | 7.500 | 1.000 | 9:05 | ຂ |
| | | | 7.550 | 1.000 | 9:05 | ຄ |

ອີງຕາມຫຼັກການບູລິມະສິດດ້ານລາຄາ ດັ່ງຕາຕະລາງຂ້າງເທິງ ແມ່ນຜູ່ລົງທຶນ ຄ ຈະສາມາດຊື້ຮຸ້ນໄດ້ໃນຈຳນວນ ທີ່ຜູ່ລົງທຶນ ຄ ຕ້ອງການຊື້ ຄື: 1.000 ຮຸ້ນ, ໃນລາຄາ 7.550 ກີບ ແລະ ຜູ່ລົງທຶນ ກ ກໍຈະສາມາດຂາຍໄດ້ໃນຈຳນວນ 1.000 ຮຸ້ນ, ໃນລາຄາ 7.550 ກີບ.

2) ບູລິມະສິດດ້ານເວລາ

ໃນກໍລະນີທີມີສົ່ງຄຳສັ່ງຊື້ ຫຼື ຂາຍ ທີ່ມີລາຄາເທົ່າກັນ, ສົ່ງຄຳສັ່ງຊື້ ຫຼື ຄຳສັ່ງຂາຍ ທີ່ສົ່ງເຂົ້າມາກ່ອນຈະໄດ້ບູລິມະສິດກ່ອນ.

<u>ຕົວຢ່າງ</u>:

| ຜູ່ລົງທຶນ | ເວລາ | ຈຳນວນຮຸ້ນສະເໜີຂາຍ (ຮຸ້ນ) | ລາຄາ (ກີບ) | ຈຳນວນຮຸ້ນສະເໜີຊື້ (ຮຸ້ນ) | ເວລາ | ຜູ່ລົງທຶນ |
|---|---|---|---|---|---|---|
| ກ | 9:05 | 1.000 | 7.500 | | | |
| | | | 7.500 | 1.000 | 9:05 | ຂ |
| | | | 7.550 | 1.000 | 9:06 | ຄ |

ອີງຕາມຫຼັກການບູລິມະສິດດ້ານເວລາ ດັ່ງຕາຕະລາງຂ້າງເທິງ ແມ່ນຜູ່ລົງທຶນ ຂ ຈະຊື້ຮຸ້ນໄດ້ໃນຈຳນວນທີ່ຜູ່ລົງທຶນ ຂ ຕ້ອງການຊື້ ຄື: 1.000 ຮຸ້ນ, ໃນລາຄາ 7.500 ກີບ.

3) ບູລິມະສິດດ້ານປະລິມານ

ໃນກໍລະນີທີມີຄຳສັ່ງຊື້ ຫຼື ຂາຍ ທີ່ມີລາຄາເທົ່າກັນ ແລະ ເວລາດຽວກັນ, ຄຳສັ່ງຊື້ ຫຼື ຄຳສັ່ງຂາຍທີ່ມີປະລິມານສູງກວ່າຈະໄດ້ບູລິມະສິດນັ້ນກ່ອນ.

ຕົວຢ່າງ:

| ຜູ່ລົງທຶນ | ເວລາ | ຈຳນວນຮຸ້ນສະເໜີຂາຍ (ຮຸ້ນ) | ລາຄາ (ກີບ) | ຈຳນວນຮຸ້ນສະເໜີຊື້ (ຮຸ້ນ) | ເວລາ | ຜູ່ລົງທຶນ |
|---|---|---|---|---|---|---|
| ກ | 9:10 | 1.000 | 7.500 | | | |
| | | | 7.500 | 500 | 9:10 | ຂ |
| | | | 7.500 | 1.000 | 9:10 | ຄ |

ອີງຕາມຫຼັກການບູລິມະສິດດ້ານປະລິມານ ດັ່ງຕາຕະລາງຂ້າງເທິງ ແມ່ນຜູ່ລົງທຶນ ຄ ຈະຊື້ຮຸ້ນໄດ້ໃນຈຳ ນວນທີ່ຜູ່ລົງທຶນ ຄ ຕ້ອງການຊື້ ຄື: 1.000 ຮຸ້ນ, ໃນລາຄາ 7.500 ກີບ.